**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.**

ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ: 365 /ຄຊກລ.ຫກ.ຄພ

ນະຄອນຫລວງວຽງຈັນ, ວັນທີ: 08 ພຶດສະພາ 2023

**ບົດລາຍງານຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວວຽກງານເກັບກູ້ລະເບີດຂອງ ອົງການ ແມັກລາວ ປະຈຳ ແຂວງ ຊຽງຂວາງ, ໄລຍະທີ 03.**

**I. ພາກສະເໜີ.**

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 273/ຫຄຊກລ. ລົງວັນ 30/03/2023 ວ່າດ້ວຍການແຕ່ງຕັ້ງໜ່ວຍງານມາດຕະຖານ ແລະ ຄ້ຳປະກັນຄຸນນະພາບ ລົງຕິດຕາມກວດກາ ການປະຕິບັດງານ ອົງການແມັກ ປະຈຳແຂວງຊຽງຂວາງ. ເລີ່ມແຕ່ວັນທີ່ 02 ຫາ 08 ເມສາ 2023 ໂດຍມີຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ໄດ້ດຳເນີນການເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດວຽກງານ ການເກັບກູ້, ສຳຫຼວດດ້ານວິຊາການ ແລະ ທຳລາຍລະເບີດ.

- ຄະນະທີມງານກວດກາມີລາຍຊື່ດັ່ງລຸ່ມນີ້:
  1. ທ່ານ ບຸນຮຽງ ສຸກຈັນທະລາວົງ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
  2. ທ່ານ ໄລທອງ ຈັນທາທິລາດ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
  3. ທ່ານ ພູວົງ ສີສະໝັກ ວິຊາການຄຸ້ມຄອງຄຸນນະພາບ/ຂັບລົດ ຫ້ອງການ ຄຊກລ.
  4. ທ່ານ ແພງສີ ດວງພັນໄຊ ວິຊາການ/ແພດໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
  5. ທ່ານ ສອນໄຊ ພົມມະທຳ ວິຊາການ/ແພດໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
  6. ທ່ານ ບຸນເຮືອງ ແສງທຸມມີ ວິຊາການ ຫ້ອງການ ຄຄກລຂ.
  7. ທ່ານ ຍຸງຄຳ ວົງລະພາ ວິຊາການ ຫ້ອງການ ຄຄກລຂ.

**ພາກສ່ວນອົງການແມັກມີຄື :**

1. ທ່ານ ນ. ແມັກມະນີ ມັງໜໍ່ເມກ ຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ອົງການເກັບກູ້ລະເບີດແມັກ.
2. ທ່ານ ນ. ພຸດທະສອນ ນອນທະບຸດ ຫົວໜ້າຝ່າຍປະຕິບັດງານຂັ້ນແຂວງ ອົງການເກັບກູ້ລະເບີດແມັກ.
3. ທ່ານ ນ. ຟອງສະໝຸດ ສາຍມາລາ (QMT,04).
4. ທ່ານ ເຕົ້າຢ່າ (PM) ແພດປະຈຳຫ້ອງການ ແມັກ ແຂວງ ຊຽງຂວາງ.

**II. ຈຸດປະສົງ.**

ຕິດຕາມກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການ, ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການປະຕິບັດສຳຫຼວດ, ເກັບກູ້ ແລະ ທຳລາຍ ລບຕ ໃຫ້ມີປະສິດທິພາບສູງ, ມີຄວາມປອດໄພກວ່າເກົ່າ ແລະ ເພື່ອຊຸກຍູ້, ປັບປຸງການປະຕິບັດງານ, ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

**III. ພາກສ່ວນຫ້ອງການ.**

- ຈຳນວນພະນັກງານ ແລະ ຄຸນວຸດທິຂອງພະນັກງານອົງການ ແມັກ ປັດຈຸບັນປະກອບມີພະນັກງານທັງໝົດຈຳນວນ: 871 ຄົນ, ຍິງ 306 ຄົນ, ໃນນີ້ມີພະນັກງານຝ່າຍສະໜັບສະໜູນ 33 ຄົນ, ຍິງ 08 ຄົນ ພະນັກງານປະຕິບັດງານພາກສະໜາມມີ 838 ຄົນ, ຍິງ 298 ຄົນ, ມີຊ່ຽວຊານຕ່າງປະເທດ 04 ຄົນ, ຍິງ 01 ຄົນ ແລະ ຊ່ຽວຊານຄົນລາວ 01 ຄົນ, ເຊິ່ງປະກອບທີມງານມີຄື:

- ທີມງານໂຄສະນາສຶກສາຄວາມສ່ຽງ ມີຈຳນວນ 02 ທີມ.
- ທີມງານສຳຫຼວດບໍ່ແມ່ນດ້ານວິຊາການ 01 ທີມ.
- ທີມງານສຳຫຼວດທາງດ້ານວິຊາການຈຳນວນ 15 ທີມ.
- ທີມງານກວດກູ້ພື້ນທີ່ ມີ 37 ທີມ.
- ທີມງານທຳລາຍລະເບີດເຄື່ອນທີ່ມີ 04 ທີມ.

ອົງການເກັບກູ້ລະເບີດແມັກລາວ ປະຈຳແຂວງຊຽງຂວາງ ໄດ້ຮັບທຶນສະໜັບສະໜູນ ຈາກກະຊວງການຕ່າງປະເທດສະຫະລັດອາເມລິກາ (WRA) ການເຄື່ອນໄຫວວຽກງານສຳຫຼວດກວດກູ້ ແລະ ທຳລາຍລະເບີດຢູ່ 07 ເມືອງຄື: ເມືອງ ແປກ, ເມືອງ ໝອກ, ເມືອງ ພູກູດ, ເມືອງ ຜາໄຊ, ເມືອງ ຄູນ, ເມືອງ ຄຳ, ແລະ ເມືອງ ໜອງແຮດ, ໃນແຜນປີໄລຍະທີ 03, 2023 ມີເນື້ອທີ່ກວດກູ້ທັງໝົດ 11,129,600 ຕາແມັດ ແລະ ສຳຫຼວດທາງດ້ານວິຊາການຕາມແຜນປີແມ່ນ 85,500,000 ຕາແມັດ.

**ກິດຈະກຳ ແລະ ຄວາມຄືບໜ້າແຕ່ລະໜ້າວຽກຕາມແຜນປີ2021 ຄື:**

- ກິດຈະກຳໂຄສະນາສຶກສາຄວາມສ່ຽງ (MRE) ຕາມແຜນປີ 2023 ແມ່ນ 48 ບ້ານ, ຈັດຕັ້ງປະຕິບັດແຕ່ເດືອນມັງກອນ ຫາ ເດືອນ ກຸມພາ, ສາມາດຈັດຕັ້ງປະຕິບັດໄດ້ 08 ບ້ານ, ຖ້າທຽບໃສ່ (MOU) ແມ່ນສຳເລັດເທົ່າກັບ 7,1 %.
- ກິດຈະກຳສຳຫຼວດທີ່ບໍ່ແມ່ນດ້ານວິຊາການ (NTS) ຕາມແຜນປີ 2023 ແມ່ນ 24 ບ້ານ, ຈັດຕັ້ງປະຕິບັດແຕ່ເດືອນມັງກອນ ຫາ ເດືອນ ກຸມພາ, ສາມາດຈັດຕັ້ງປະຕິບັດໄດ້ 04 ບ້ານ, ປະຊາຊົນລາຍງານພົບເຫັນລະເບີດຈຳນວນ 466 ຄັ້ງ, ລາຍງານຜ່ານທາງເບີໂທອອນລາຍ 69 ຄັ້ງ, ລາຍງານຜ່ານທາງອຳນາດການປົກຄອງບ້ານ/ອົງການແມັກ 353 ຄັ້ງ, ແລະ ຜ່ານທາງໂຄສະນາສຶກສາຄວາມສ່ຽງ 39 ຄັ້ງ ຖ້າທຽບໃສ່ (MOU) ແມ່ນສຳເລັດເທົ່າກັບ 7,14 %.
- ວຽກງານສຳຫຼວດທາງດ້ານວິຊາການ (TS) ຈັດຕັ້ງປະຕິບັດໄດ້ແຕ່ເດືອນ ມັງກອນ ຫາ ເດືອນ ກຸມພາ 2023 ຕາມແຜນປີ 2023 ແມ່ນ 85,500,00 ຕາແມັດ, ສຳຫຼວດພື້ນທີ່ໄດ້ 15,260,000 ຕາແມັດ, ສາມາດກຳນົດເປັນພື້ນທີ່ຢືນຢັນອັນຕະລາຍ (CHA) ໄດ້ 12,806,123 ຕາແມັດ, ທຳລາຍລະເບີດທີ່ສຳຫຼວດພົບຈຳນວນ 947 ລູກ, ບົມບີ້ 932 ໜ່ວຍ, ທຽບໃສ່ແຜນປີເທົ່າກັບ 7,61%.
- ວຽກງານກວດກູ້ຕາມພື້ນທີ່ (AC) ຈັດຕັ້ງປະຕິບັດໄດ້ແຕ່ເດືອນ ມັງກອນ ຫາ ເດືອນ ກຸມພາ 2023 ຕາມແຜນປີ 2023 ແມ່ນ 11,129,600 ຕາແມັດ,ກວດກູ້ເນື້ອທີ່ໄດ້ 2,314,905 ຕາແມັດ, ຈັດຕັ້ງປະຕິບັດໄດ້ເທົ່າກັບ 20,7%, ສາມາດທຳລາຍລະເບີດໄດ້ຈຳນວນທັງໝົດ 1,026 ລູກ, ປະເພດບົມບີ້ 988 ໜ່ວຍ, ສາພາວຸດຈານວນ 38 ລູກ, ຜູ້ໄດ້ຮັບຜົນປະໂຫຍດທາງກົງ 4,480 ຄົນ,ທາງອ້ອມໄດ້ທັງໝົດ 20,830 ຄົນ.
- ວຽກງານທຳລາຍເຄື່ອນທີ່ຕາມປະຊາຊົນລາຍງານໄດ້ 422 ຄັ້ງ, ທຳລາຍລະເບີດໄດ້ 546 ໜ່ວຍ, ມີຜູ້ໄດ້ຮັບຜົນປະໂຫຍດທາງກົງ 4,480 ຄົນ, ທາງອ້ອມທັງໝົດ 20,830 ຄົນ.

## IV. ລົງຕິດຕາມກວດກາພາກສະໜາມ.

- ລົງຕິດຕາມກວດກາທີມງານກວດກູ້ລະເບີດ (AC 75) ບ້ານ ນາໄຊ ເມືອງ ຄູນ, ແຂວງ ຊຽງຂວາງ ລະຫັດໜ້າວຽກ Task ID : MAG_AC_2023_0904003_127 ມີພະນັກງານທັງໝົດ 12 ຄົນ ຫົວໜ້າທີມ 01 ຄົນ, ຮອງທີມ 01 ຄົນ, ວິຊາການ 08 ຄົນ, ແພດສະໜາມ 01 ຄົນ, ຂັບລົດ 01 ຄົນ, ວັນທີເລີ່ມຕົ້ນ 03/04/2023 ຄາດວ່າຈະສຳເລັດວັນທີ່ 15/05/2023 ມີເນື້ອທີ່ທັງໝົດ 32,169 ຕາແມັດ, ກວດກູ້ໄດ້ແລ້ວ 5,159 ຕາແມັດ, ກວດພົບລະເບີດປະເພດ blu 26 ຈຳນວນ 06 ໜ່ວຍ,

**ລົງຄອບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ ຈຳນວນ 13 ສະໜາມຄື:**

1. ລະຫັດໜ້າວຽກ Task ID: MAG-AC-2022-0901043-009, S= 54.863 $m^2$, QC 2,2 % = 1,250 $m^2$ ( 25 x 25) x 2 boxs.
2. ລະຫັດໜ້າວຽກ Task ID: MAG-AC-2022-0901043-198, S= 68.995 $m^2$, QC 2,1 % = 1,500 m2 (30x50)x1 box
3. ລະຫັດໜ້າວຽກ Task ID: MAG-AC-2022-0901999-187, S=76,862 $m^2$, QC 2,3% = 1,800 m2 (20 x 30)x3 boxs
4. ລະຫັດໜ້າວຽກ Task ID: MAG-AC-2022-0901999-188, S=53,908 $m^2$, QC 2,2% = 1,200 m2 (30 x 40)x1 boxs
5. ລະຫັດໜ້າວຽກ Task ID: MAG-AC-2022-0901064-232, S=71,260 $m^2$, QC 2,5% = 1,800 m2 (30 x 20)x3boxs
6. ລະຫັດໜ້າວຽກ Task ID: MAG-AC-2022-0901064-238, S=11,859 $m^2$, QC 3,3% = 400 m2 (4 x 100)x1box
7. ລະຫັດໜ້າວຽກ Task ID: MAG-AC-2022-0906008-122, S=100,000 $m^2$, QC 2,5 % = 2,500 m2 (50 x 50) x 1 box.
8. ລະຫັດໜ້າວຽກ Task ID: MAG-AC-2022-0906008-184, S=68,125 $m^2$, QC 2,2 % = 1,500 m2 (25 x 30)x2boxs
9. ລະຫັດໜ້າວຽກ Task ID: MAG-AC-2022-0906008-185, S=92,500,125 $m^2$, QC 2,1 % = 2,000 m2 (25 x 40)x2boxs
10. ລະຫັດໜ້າວຽກ Task ID: MAG-AC-2023-0906018-034, S=34,642 $m^2$, QC 2,5 % = 900 m2 (30 x 30)x1box
11. ລະຫັດໜ້າວຽກ Task ID: MAG-AC-2023-0904052-003, S=59,388 $m^2$, QC 2,1 % = 1.250 m2 (25 x 25)x2boxs
12. ລະຫັດໜ້າວຽກ Task ID: MAG-AC-2023-0904054-067, S=21,631 $m^2$, QC 2,7 % = 600 m2 (60 x 10)x1box
13. ລະຫັດໜ້າວຽກ Task ID: MAG-AC-2023-0904054-076, S=19,122 $m^2$, QC 2,9 % = 560 m2 (8 x 70)x1box

ຜ່ານການກວດກາຂອງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ຈຳນວນ 13 ສະໜາມ, ເຊິ່ງມີເນື້ອທີ່ລວມທັງໝົດ 733,155 $ມ^2$, ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ສ້າງບ້ອກຄວບຄຸມຄຸນນະພາບທັງໝົດ 23 ຈຸດ, ເຊິ່ງມີເນື້ອທີ່ຄວບຄຸມຄຸນນະພາບໄດ້ 17,260 $ມ^2$, ສະເລ່ຍເປັນເປີເຊັນເທົ່າກັບ 2,35%, ທັງ 13 ສະໜາມດັ່ງກ່າວກໍ່ເຫັນວ່າມີຄວາມປອດໄພ ບໍ່ພົບສິ້ນສ່ວນສະເກັດທີ່ໃຫ່ຍກວ່າມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້ ເຄິ່ງໜຶ່ງຂອງບົມບີ້ blu26(1/2 blu 26).

## V. ຜົນໄດ້ຮັບ

- ກວດກາລະບົບເອກະສານ, ການສະໜັບສະໜູນ, ການບັນຊາ ແລະ ລະບົບການປັກໝາຍສະໜາມອົງການເກັບກູ້ລະເບີດແມັກລາວ ແຂວງຊຽງຂວາງ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບເຊັ່ນ : ບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ, ແບບຟອມຄວບຄຸມຄຸນນະພາບພາຍໃນ, ປື້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈ້ງໄດ້, ແຜນຮອງຮັບອຸປະຕິເຫດໝວດເລືອດຂອງພະນັກງານ ແລະ ເອກະສານອື່ນໆເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກຳນົດໄວ້.

- ການປະຕິບັດງານຂອງອົງການແມັກລາວ ແຂວງ ຊຽງຂວາງ ໃນການເຄື່ອນໄຫວວຽກງານເກັບກູ້ ລບຕ ແມ່ນປະຕິບັດຕາມມາດຕະຖານການປະຕິບັດງານ, ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ, ເປັນຕົ້ນແມ່ນ ການສະໜັບສະໜູນທາງດ້ານການແພດ, ການບັນຊາສະໜາມ, ການສື່ສານ, ລະບົບການປັກໝາຍສະໜາມກວດກູ້, ພາຫະນະນຳສົ່ງຄົນເຈັບ, ການເກັບກູ້ລະເບີດໄດ້ປະຕິບັດຕາມລະບຽບ ແລະ ຂັ້ນຕອນການກວດກູ້ ກ່ອນການລົງປະຕິບັດວຽກໃນແຕ່ລະມື້ໄດ້ມີການທົດສອບເຄື່ອງກວດລະເບີດເປົ້າໝາຍ blu 26 ເຄິ່ງໜ່ວຍ, ໃນຄວາມເລິກ 25 ຊັງຕີແມັດ, ນຳໃຊ້ເຄື່ອງກວດຫາລະເບີດ 2 ຊະນິດຄື: Vallon VMX-10 ແລະ Vallon VMH-4.

## VI. ພາກສະຫຼຸບ

ຜ່ານການຕິດຕາມກວດກາຂອງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ສະຫຼຸບໄດ້ດັ່ງນີ້:

- ລະບົບການປັກໝາຍຈຸດລ້ຽວສະໜາມ, (SP,TP) ມີບາງສະໜາມ, ເຫັນວ່າບໍ່ສອດຄ່ອງ ທີມງານກວດກູ້ລະເບີດ ຂອງອົງການແມັກ ມີບາງສະໜາມ, ໄດ້ຝັງເຫຼັກເສັ້ນ 03 ທ່ອນ, ຄວາມຍາວ 30 ຊັງຕີແມັດ, ລົງໃສ່ກາງທົ່ງນາ.
- ຫົວໜ້າທີມງານພາກສະໜາມ ເວລາປະເມີນແຜນຮັບມືອຸປະຕິເຫດປະຈຳສະໜາມ, ການຄວບຄຸມບັນຊາ, ຍັງກຳບົດຮຽນບໍ່ທັນໄດ້ດີ
- ຜ່ານການກວດກາ ແລະ ຄວບຄຸມຄຸນນະພາບທັງໝົດຈຳນວນ 13 ສະໜາມກໍ່ເຫັນວ່າພື້ນທີ່ດັ່ງກ່າວແມ່ນມີຄວາມປອດໄພ ບໍ່ພົບຊິ້ນສ່ວນສະເກັດທີ່ໃຫ່ຍກວ່າມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້ເຄິ່ງໜຶ່ງຂອງບົມບີ້ blu 26 (½ blu 26).

ຜ່ານການຕິດຕາມ ແລະ ກວດກາການປະຕິບັດງານເກັບກູ້ ອົງການແມັກລາວ ແຂວງ ຊຽງຂວາງ ເຫັນວ່າດ້ານວິຊາການແມ່ນປະຕິບັດຖືກຕ້ອງຕາມທີ່ກຳນົດໃນມາດຕະຖານປະຕິບັດງານ (SOP) ຂອງອົງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ.** | **ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນະພາບ.**

ຫ້ອງການ ຄຊກລ

**ໂຈນແຍງ ແພງທອງສະຫວັດ**

ບ່ອນນຳສົ່ງ:
-ອົງການກຸ່ມປຶກສາເກັບກູ້ລະເບີດ ແມັກລາວ ວຽງຈັນ 1 ສະບັບເພື່ອຊາບ
-ອົງການແມັກລາວ ແຂວງຊຽງຂວາງ 1 ສະບັບເພື່ອຈັດຕັ້ງປະຕິບັດ
- ຫ້ອງການ ຫຄຊກລ ເກັບມ້ຽນ 1 ສະບັບ
- ຫ້ອງການ ຄຄກລຂ ຊຽງຂວາງ 1 ສະບັບເພື່ອຊາບ

ບ້ານ ທົ່ງສ້າງນາງ, ເມືອງ ຈັນທະບູລີ, ນະຄອນຫຼວງ, ຕູ້ປນ: 7261, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,
ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la